# ອ່ວຍພອນການເດີນທາງ

ຂໍສະແດງ ຄວາມຍິນດີ ມີໂອກາດ
ເມື່ອຢາມຍາຕ ພວກພ້ອງ ພີ່ນ້ອງລາວ
ທີ່ດຳຣົງ ຍັງຄົງຢູ່ ປະເທດເຮົາ
ໄດ້ກັບຕ່າວ ຄືນຫັນ ບ້ານເກີດກາຍ

ຂໍສົ່ງຈິດ ຄິດຫ່ວງໄຍ ໃຈຂ້ອງກ່ຽວ
ຕອນໄປທ່ຽວ ທ່ອງຊົມ ສົມຣືທັຍ
ການເລາະຊົມ ທຳມະຊາດ ທັສນະໄປ
ທ່ອງທ່ຽວໄທ ໃຈສຸຂສັນ ສຳຣານເພີນ

ຂໍໃຫ້ການ ເດີນທາງໄປ ໄດ້ໂຊກລາພ
ສວັດດີພາບ ທ່ອງທາງດີນ ບິນເຫາະເຫີນ
ນັ່ງເຮືອໄປ ໃຫ້ປອດພັຍ ໃຈເພີດເພີນ
ທຸກທາງເດີນ ຈົ່ງສະດວກ ພົບພວກເພື່ອນ

ຊຽນຄຳກອນ ມາອ່ວຍພອນ ກ່ອນວັນຈາກ
ຕ້ອງຈຳພາກ ໄກພວກນ້ອງ ຄອງນັບເດືອນ
ຄົງຫາງອຍເຫງົາ ເຝົ້າຄອຍຮັບ ກັບບ້ານເຮືອນ
ຢາກບອກເຕືອນ ວ່າພວກນ້ອງ ຄອງອາຈານ

ການເດີນທາງ ຢ່າຂັດສົນ ພົ້ນຕລອດ
ໄປໃຫ້ເຖິງ ມາໃຫ້ຮອດ ປອດພັຍພານ
ວາງແຜນໄວ້ ໄປໃຫ້ຄົບ ຢ່າພົບມານ
ຈະລໍວັນ ອາຈານກັບ ນັບເວລາ

ນ້ອງທຸກຄົນ ຈະລໍວັນ ອາຈານຕ່າວ
ບິນຈາກລາວ ກັບເຂົ້າມາ ການາດາ
ເຫັນຂອງຝາກ ຢ່າລືມຊື້ ຕິດມືມາ
ເດືອນມີນາ ຢ່າລືມຄຳ ຈະຖາມເອົາ

ຫນູຂັນເງິນ ສີພັນດອນ ສົ່ງພອນໃຫ້
ອອກຈາກໃຈ ເພາະເປັນຫ່ວງ ຈຶ່ງທວງທາວ
ເມື່ອເຫັນສິດ ມິດອາຈານ ທາງບ້ານເຮົາ
ຢ່າລືມເວົ້າ ວ່າພວກເຮົາ ຖາມສະບາຍ

ຕອນກັບມາ ຢ່າລືມເອົາ ຮູບມາຝາກ
ຢາກຮູ້ຈັກ ໄດ້ຕິດຕາມ ຢ້ຽມຢາມໃຜ
ນ້ອງຈະຊ່ອຍ ປ່ອຍເຂົ້າໄປ ຢູ່ແວັພໄຊທ໌
ຍ້ອມນ້ຳໃຈ ໂປຣດຢ່າລືມ ດື່ມ ເບຍລາວ

